# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມື ລາວ-ເຢຍຣະມັນ ປີທີ I ສະບັບທີ 1 *ສິງຫາ1993

## ກ່ຽວກັບໂຄງການ

ປະເທດລາວປັດຈຸບັນ ພວມກ້າວໄປສູ່ ການປັບປຸງ ດັດໃໝ່ຢ່າງຮອບດ້ານ,ທັງທາງດ້ານການເມືອງ ເສດຖະກິດ ແລະວັດທະນະທຳ. ໃນດ້ານກໍ່ສ້າງເສດຖະກິດ ລັດຖະບານເຮົາ ມີເຈດຈຳນົງທີ່ຈະຮັບເອົາການຊ່ວຍເຫລືອ ແລະການລົງທຶນຂອງຕ່າງປະເທດ ສ່ວນທາງດ້ານ ວັດທະນະທຳ ກໍໄດ້ມີຄວາມພະຍາຍາມ ທີ່ຈະປົກປັກຮັກສາ ແລະ ຟື້ນຟູ ປະເພນີອັນດີງາມ ຂອງຊາດໄວ້ໃຫ້ໝັ້ນຄົງ ແລະ ມີການ ຂະຫຍາຍຕົວດີຂຶ້ນກວ່າເກົ່າ.

ອີງຕາມສະພາບລວມ ຂອງວຽກງານປົກປັກ ຮັກສາໜັງສືໃບລານຢູ່ປະເທດເຮົາ ໃນປັດຈຸບັນ ເຫັນວ່າ ຈະຕ້ອງປຸກລຸກຄວາມສົນໃຈຂອງມວນຊົນໃຫ້ເຫັນ ຄວາມ ສຳຄັນຂອງມໍລະດົກຊາດ ທ າງດ້ານວັດທະນະທຳເກົ່າ ແກ່ບູຮານ, ດຶງດູດໃຫ້ທຸກພາກສ່ວນເຂົ້າຮ່ວມ ໃນວຽກງານນີ້ ຢ່າງກວ້າງຂວາງທັງນີ້ກໍເພາະວ່າ ເອກະສານບູຮານ ທີ່ ສຳຄັນ ເຫຼົ່ານີ້ ຂາດໂອກາດທີ່ຈະໄດ້ຮັບຄວາມສົນໃຈ ແລະ ຖະນຸຖະໜອມເທົ່າທີ່ຄວນ ຕະຫຼອດໄລຍະຫຼາຍທົດ ສະວັດທີ່ຜ່ານມາ, ຖືກຊຳລຸດເປ່ເພ, ຕົກເຮ່ຍເສຍຫາຍ, ຂາດພູກຂາດມັດໄປຍ້ອນຄວາມລະເລີຍ ຫຼື ຂາດທຶນຮອນ ແລະ ພາຫະນະໃນການສ້ອມແຊມ.

ດ້ວຍສາເຫດນີ້ ຈຶ່ງໄດ້ສະເໜີ ໂຄງການ ຮ່ວມມື ກໍ່ລັດຖະບານ ສ.ສ.ເຢຍຣະມັນ ໂດຍໃຫ້ຊື່ ໂຄງການວ່າ: ໂຄງການປົກປັກຮັກສາໜັງສືໃບລານລາວ', ເປັນການ ຮ່ວມມືໄລຍະຍາວເຖິງ 8 ປີ (1993-2000) ລະຫວ່າງ ລັດຖະບານ ສ.ປ.ປ.ລາວ ແລະ ສ.ສ.ເຢຍຣະມັນ ຊຶ່ງ ໄດ້ເຊັນສັນຍາຮ່ວມມື ຢ່າງເປັນທາງການໃນວັນທີ 23 ມີນາ 1993 ທີ່ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

ໂຄງການນີ້ເວົ້າໃສ່ ປົກປັກຮັກສາໜັງສືຜູກໃບລານ ແລະ ພັບສາທີ່ເກັບມ້ຽນໄວ້ຢູ່ຕາມວັດຕ່າງໆ ແລະ ຫໍ ສະໝຸດບາງແຫ່ງໃນທົ່ວປະເທດ, ຊຸກຍູ້ຊ່ວຍເຫຼືອໃຫ້ ພຸທະ ສາສະນິກະຊົນທັງຫຼາຍ ຢູ່ໃນລາວ ແລະ ສະຖາບັນ ວິຊາການ ໃນປະເທດ ເຮົາສາມາດທຳການປົກປັກຮັກສາ ມໍລະດົກ ທາງວັນນະຄະດີຂອງຊາດເຮົາ ເອົາໄວ້ ຢ່າງມີ ຜົນດີ, ສະກັດກັ້ນບໍ່ໃຫ້ມີສະພາບເສຍຫາຍ ຕື່ມຕໍ່ ໄປອີກ, ບໍ່ວ່າຍ້ອນໜູກັດ,ປວກກິນຫຼືອື່ນໆ. ໜັງສືໃບລານ ຈະຕ້ອງ ໄດ້ຮັບການອະນາໄມ, ສ້ອມແຊມ ແລະ ເກັບ ຮັກສາມ້ຽນ ໄວ້ ໃນທີ່ປອດໄພດີ ຕູ້ ຫຼືຫີບຄຳພີ.

ໜັງສືໃບລານ ທີ່ໄດ້ຮັບ ການປົກປັກຮັກສາຈະໄດ້ ບັນທຶກຂໍ້ມູນ, ຂຶ້ນບັນຊີສຳຫຼວດ ແລະ ຈັດໝວດໝູ່ ແລ້ວຈັດທຳເປັນບັນຊີລະອຽດ. ບັນຊີ ຂອງແຕ່ລະວັດ ທີ່ ສຳຫຼວດແລ້ວທັງໝົດ ຈະນຳໄປ ບັນຈຸເຂົ້າລະບົບ ເກັບຂໍ້ມູນ ຄອມພິວເຕີ ທີ່ສູນໂຄງການ ເພື່ອປົກປັກຮັກສາ ແລະ ແຈກຢາຍ ໃຫ້ແຕ່ລະວັດ ທີ່ໄດ້ສຳຫຼວດ.

( ອ່ານຕໍ່ໜ້າ 12 )

### ເຊີນອ່ານ

ມໍລະດົກ ທີ່ ຄວນແກ່ການອະນຸລັກ
ຊາວຕາເວັນຕົກ ກັບວັດທະນະທຳອາຊີ
ການເຄື່ອນໄຫວ ຂອງໂຄງການ
ປະຫວັດການນຳໃຊ້ ໃບລານ
ທິດທາງ ແລະ ແຜນການ

✹ ບົວບານ ວໍລະຂຸນ

# ມໍລະດົກ
## ທີ່ ຄວນແກ່ການອະນຸລັກ



ໜັງສືພູກໃບລານ ແມ່ນມໍລະດົກຂອງຊາດ ມີຄຸນຄ່າສູງທາງດ້ານວັດທະນະທຳອັນນະຄະດີ ມັນເປັນເໝືອນ ກັບຄັງສາງຄວາມຮູ້ໃນທຸກດ້ານ ຂອງຄົນລາວໃນສະໄໝບູຮານພ້ອມກັນນັ້ນມັນກໍເປັນລາຍລັກອັກສອນ ບອກໃຫ້ຄົນໃນສະໄໝປັດຈຸບັນ ຮູ້ໄດ້ ລະດັບຊີວິດຄວາມເປັນຢູ່ ແລະອະລິຍະທຳດ້ານວັດຖຸ ແລະຈິດໃຈຂອງຊາດລາວ ແລະຄົນລາວໃນສະໄໝບູຮານະ ການ.

ໂດຍມອງເຫັນຄຸນຄ່າຂອງວັດທະນະທຳ ອັນເປັນມໍລະດົກຂອງຊາດ ດັ່ງກ່າວຂ້າງເທິງ ແນວທາງຂອງລັດຖະບານເຮົາ ຍາມໃດ ລ້ວນແຕ່ ຖືເປັນສຳຄັນ ການສົ່ງເສີມວັດທະນະທຳທີ່ມີຫລາຍສີສັນຂອງຊາດ ກະຊວງຖະແຫລງຂ່າວແລະ ວັດທະນະທຳ ທີ່ຮັບຜິດຊອບ ໂດຍກົງ ໃນຂົງເຂດນີ້ ກໍໄດ້ມີແຜນ ນະໂຍບາຍ ໃນການນຳເອົາວັດທະນະທຳ ເຂົ້າໄປ ພັດທະນາ ດ້ານຈິດໃຈຄຸນສົມບັດ ແລະ ແບບແຜນດຳລົງຊີວິດ ໃຫ້ແກ່ປະຊາຊົນ ພົນລະເມືອງ ຊຶ່ງໃນນັ້ນ ກໍ່ໄດ້ມີແຜນ ນະໂຍບາຍໃນການອະນຸລັກໜັງສືພູກໃບລານ ໃຫ້ຄົງຢູ່ ຄູ່ບ້ານຄູ່ເມືອງ ໄວ້ໃຫ້ຍາວນານທີ່ສຸດ.

ໃນປີ 1992 ລັດຖະບານ ໄດ້ອະນຸມັດ ໃຫ້ສະເໜີໂຄງການຮ່ວມມື ກັບລັດຖະບານ ສາທາລະນະລັດສະຫະພັນ ເຢຍຣະມັນ ໂດຍວາງຂອບເຂດເປັນໂຄງການລະຍະຍາວ 8-10 ປີ ແລະ ກວມເນື້ອທີ່ທົ່ວໝົດປະເທດ ສະເພາະ ບ່ອນທີ່ມີແຫຼ່ງເກັບມ້ຽນໜັງສື. ຈຸດປະສົງຕົ້ນຕໍ ຂອງ ໂຄງການນີ້ ກໍ່ຄື ດ້ານໜຶ່ງແມ່ນປົກປັກຮັກສາດ້ານວັດຖຸພາບ ແຕ່ດ້ານໜຶ່ງທີ່ສຳຄັນກວ່ານັ້ນ ແມ່ນເຮັດໃຫ້ ໜັງສືໃບລານອັນເປັນຄັງສາງຄວາມຮູ້ນັ້ນ ເກີດມີຄວາມ ຕ້ອງການ ແລະ ການນຳໃຊ້ ເພື່ອການສຶກສາຄົ້ນຄວ້າ ຫາຂອງດີທີ່ມີຢູ່ໃນໃບລານ ຊຶ່ງແມ່ນສະຕິປັນຍາ ມັນສະໝອງຂອງຄົນລາວບູຮານ ໄດ້ປະໄວ້ ເພື່ອນຳມາໃຊ້ ໃຫ້ເກີດປະໂຫຍດ ຕໍ່ສັງຄົມໃນປັດຈຸບັນ ແລະ ເພື່ອສົ່ງເສີມການເຜີຍແຜ່ຄວາມຮູ້ ຈາກເອກະສານບູຮານນີ້ ໂດຍຈະປະລິວັດມາເປັນອັກສອນ ແລະ ພາສາລາວ ປັດຈຸບັນ ທີ່ທຸກຄົນອ່ານໄດ້ ແລະ ເຂົ້າໃຈເນື້ອຫາ, ພ້ອມກັນນັ້ນກໍ່ເພື່ອສ້າງເປັນຂໍ້ມູນທີ່ສາມາດນຳໄປດັດແປງ ແລະ ນຳໃຊ້ໃນວົງການສຶກສາໄດ້ນັບແຕ່ ມັດທະຍົມ ຂັ້ນຮອດຊັ້ນສູງ.

ຄະນະຮັບຜິດຊອບໂຄງການ ທີ່ຂຶ້ນກັບ ກົມວັນນະ

☞

ຄະດີ ແລະ ວັດທະນະທຳມະຫາຊົນ ໄດ້ທຳການ ດ້ວຍຄວາມຮັບຜິດຊອບສູງ. ຕາມສະຖິຕິຫລ້າສຸດ ໃຫ້ຮູ້ວ່າ ໄລ່ມາ ເຖິງປັດຈຸບັນ ຄະນະທຳງານ ເພື່ອໂຄງການ ຫນັງສືຜູກໃບລານ ສາມາດລົງໄປສຳຫລວດຂຶ້ນບັນຊີ ສັບຊ້ອນ ຫນັງສື ແຕກຜູກ ເຮັດອະນາໄມ ແລະ ຫໍ່ຫຸ້ມມັດຖືບມັດ ສຳເລັດໄປແລ້ວ 34 ວັດ ແລະ ມີ 19.213 ຜູກ. ນີ້ແມ່ນ ຜົນແຫ່ງການອອກແຮງງານ ທີ່ມີ ຄວາມຮັບຜິດຊອບ ຂອງຄະນະໂຄງການ ແລະ ການເຮັດວຽກທີ່ມີຄວາມບາກບັ່ນອົດທົນ ຂອງບັນດານັກວິຊາການ ຜົນສຳເລັດເບື້ອງຕົ້ນ ຂອງການອະນຸລັກ ຫນັງສືຜູກໃບລານ ດັ່ງກ່າວມານັ້ນ ເກີດມາຈາກ ຄວາມເປັນໃຈ ແລະ ສະຫນັບສະຫນູນອັນເຕັມໄປດ້ວຍ ຄວາມເຫລື້ອມໃສ ຂອງ ພຸດທະບໍລິສັດ ທັງຫລາຍທີ່ມີຕໍ່ ຫນັງສືຜູກໃບລານ ເພິ່ນຖືວ່າ ການອະນຸລັກ ຫນັງສືໃບລານ ເປັນການໃຫ້ທານຢ່າງຫນຶ່ງ, ເປັນການທຳບຸນກຸສົນ ເພື່ອຜົນປະໂຫຍດ ຂອງທົ່ວສັງຄົມ. ຕາມທີ່ຜູ້ຂຽນ ໄດ້ລົງໄປເຫັນການສຳຫລວດ ຢູ່ພື້ນຖານ ເຖົ້າແກ່ແນວໂຮມ ບ່າວສາວ ພາກັນລົງມາໂຮມ ຢູ່ສາລາໂຮງທຳ ທີ່ວັດ ຢ່າງຄັບຄັ່ງ ເພື່ອພາກັນ ເຮັດອະນາໄມ ແລະ ມັດຖືບມັດ ຫນັງສືໃບລານ ບາງຄົນ ກໍ່ຂານອາສາເອົາຜ້າຫໍ່ ຫນັງສືເກົ່າ ແລະ ເປື້ອນຝຸ່ນ ນັ້ນ ໄປຊັກ ບາງຄົນກໍ່ອະນຸໂມທະນາ ເປັນຈະຕຸປັດໄຈໄຊຍະທານອື່ນໆ ເພື່ອປະກອບສ່ວນເຂົ້າ ໃນການປົກປັກຮັກສາ ຫນັງສືຜູກໃບລານ ຢູ່ໃນບ້ານ ແລະ ທ້ອງຖິ່ນ ຂອງເຂົາເຈົ້າ ໃນຍາມກາງຄືນ ກໍ່ພາກັນແຫ່ຫນັງສື ຮອບສາລາໂຮງທຳ ຢ່າງຟົດຟື້ນຄຶກຄື້ນ ຈົນເຮັດໃຫ້ມື້ນັ້ນ ເກີດມີບັນຍາກາດ ເຫມືອນກັບ ບຸນປາງໃຫຍ່.

ໃນທົ່ວ ປະເທດລາວ ມີວັດຢູ່ 1.700 ກວ່າແຫ່ງ ສະນັ້ນຍັງອີກຫລາຍເສນຜູກ ຍັງບໍ່ທັນ ໄດ້ທຳການ ສຳຫລວດ ແລະ ປົກປັກຮັກສາ. ເພື່ອເຮັດໃຫ້ ໂຄງການ ໃບລານ ຖືກດຶງເອົາຄວາມສົນໃຈ ຈາກສັງຄົມ ໃຫ້ຫລາຍຂຶ້ນ ແລະ ປຸກລະດົມກຳລັງ ເຂົ້າຮ່ວມ ການອະນຸລັກ ໃຫ້ຫລາຍຂຶ້ນນັ້ນ ມັນຮຽກຮ້ອງ ໃຫ້ມີ ການປະຊາສຳພັນ ເພື່ອເຮັດໃຫ້ ຄົນທັງຫລາຍ ເຂົ້າໃຈຈຸດປະສົງ ຂອງການອະນຸລັກ ແລະ ຄຸນປະໂຫຍດ ຂອງຫນັງສືຜູກໃບລານ ຢ່າງກວ້າງຂວາງ ກວ່າເກົ່າ. ການປະຊາສຳພັນບໍ່ພຽງແຕ່ໃຊ້ຮູບການ ສົນທະນາ ຈັດສຳມະນາ ເວົ້າສູ່ກັນຟັງ ເຊີນຊຸ່ມຊອຊານ ມາປາຖະກະຖາເທົ່ານັ້ນ ຍັງຕ້ອງການ ການປະຊາສຳພັນ ດ້ວຍຮູບການອື່ນອີກ. ການອອກຈົດຫມາຍເຫດ ສຳລັບໂຄງການ ຫນັງສືໃບລານ ກໍ່ແມ່ນຮູບການຫນຶ່ງ ຂອງການປະຊາສຳພັນ ທີ່ມີຄຸນປະໂຫຍດ ອັນໃຫຍ່ຫລວງ ຕໍ່ສັງຄົມ ຄົນທີ່ອ່ານຫນັງສື ແລະ ຈົດຫມາຍເຫດນີ້ ມີຫນ້າທີ່ໃນການ ສ່ອງແສງ ຂະບວນການ ອະນຸລັກ ຄວາມຄິດລຳເຫັນ ຂອງມະຫາຊົນ ນັບທັງເນື້ອຫາອັນສຳຄັນ ທີ່ມີຢູ່ໃນ ຫນັງສືຜູກໃບລານ ກໍ່ຈະໄດ້ ກັ່ນກອງເພື່ອພິມເຜີຍແຜ່ໃນຈົດຫມາຍເຫດນີ້ ສະນັ້ນ ຈົດຫມາຍເຫດນີ້ຈະເປັນ ເພື່ອນຮ່ວມຄິດ ຮ່ວມໃຈ ຂອງບັນດາທ່ານ ຜູ້ອ່ານ ທີ່ ຝັກໄຝ່ຢາກໄຕ່ເຕົ້າເຂົ້າໄປ ຊອກຫາພູມປັນຍາ ຂອງຄົນລາວສະໄຫມບູຮານ ຈາກຫນັງສືຜູກໃບລານ ກໍ່ຈະໄດ້ຮັບປະໂຫຍດ ຈາກການອ່ານ ຈົດຫມາຍເຫດນີ້ ຢູ່ບໍ່ຫນ້ອຍ.



# ຊາວຕາເວັນຕົກ ກັບ ວັດທະນະທຳອາຊີ

ໂດຍ ສາດສະດາຈານ ດຣ. ຣະຣວນ ຣຸນດີອຸສ

ຫລາຍຄົນ ອາດຈະມີຄວາມສົງໃສວ່າ ເປັນຫຍັງ ຄົນຢຸໂຣບ ຈຶ່ງມາກ່ຽວຂ້ອງກັບການອະນຸລັກ ປົກປັກ ຮັກສາ ໜັງສືໃບລານລາວ? ເປັນຫຍັງ ຄົນຕາເວັນຕົກ ຈຶ່ງມີຄວາມກະຕືລືລົ້ນ ຢາກຮູ້ ຢາກເຫັນວັດທະນະທຳ ຂອງພູມີພາກນີ້? ເຊິ່ງຂ້າພະເຈົ້າ ກໍ່ເປັນຜູ້ໜຶ່ງ ໃນ ບັນດານັກຄົ້ນຄວ້າ ທີ່ເຂົ້າມາສຶກສາຫາຄວາມຮູ້ ໃນ ວັດທະນະທຳທາງຕາເວັນອອກ. ປະກົດການດັ່ງກ່າວ ກໍ່ເປັນເລື່ອງທີ່ມີມາດົນນານແລ້ວ.

ໄລຍະ 200-300 ປີ ກ່ອນ ໃນທະວີບຢຸໂຣບ ໄດ້ມີຄົນປະເທດຝະລັ່ງ ອັງກິດ ເຢຍຣະມັນ ເກີດມີ ຄວາມຢາກຮູ້ຢາກເຫັນວັດທະນະທຳທາງຕາເວັນອອກ ເສີຍມີຄົນປະເທດອີຕາລີ ທີ່ມີຊື່ສຽງຄືທ່ານ ມາໂຄ ໂປໂລ ໄດ້ເດີນທາງຈາກອີຕາລີ ໄປ ຈີນ, ຫວຽດນາມ, ໄທ, ກຳປູເຈຍ. ໄດ້ບັນທຶກປະສົບການທີ່ໄດ້ພົບເຫັນ ເອົາໄວ້ ເຊິ່ງຂໍ້ມູນດັ່ງກ່າວ ມາຮອດປັດຈຸບັນ ຍັງຄົງມີ ຄວາມສຳຄັນຢູ່ຫລາຍ ຍ້ອນວ່າ ເປັນການບັນທຶກ ລາຍການເດີນທາງໄປຕ່າງ ປະເທດໃນສະໄໝນັ້ນ ທີ່ ເປັນຂໍ້ມູນອັນມີຄຸນຄ່າທາງ ປະຫວັດສາດ ແລະ ວັດທະ ນະທຳ ຂອງຕາເວັນອອກ ມາໂຄໂປໂລ ເປັນບຸກຄົນ ສຳຄັນໄດ້ເຮັດໃຫ້ຊາວ ຢຸໂຣບ ເກີດຄວາມສົນໃຈ ໃນ ເລື່ອງລາວຕ່າງໆທີ່ໄດ້ບັນທຶກໄວ້ ໃນສະໄໝກ່ອນ ຊີວິດຂອງຊາວຢຸໂຣບ ເປັນຊີວິດທີ່ຢູ່ໃນວົງແຄບ ຢູ່ໃນ ສັງຄົມຂອງແຕ່ລະຊາດແຕ່ລະເມືອງ ແຕ່ມີຄວາມຢາກ ສະແຫວງຫາຕື່ມ ນອກຈາກສິ່ງທີ່ ພົບເຫັນໃນປະເທດ ຂອງຕົນເອງ ຈຶ່ງມີຄົນອອກໄປຄ້າຂາຍ ຢູ່ຕ່າງປະເທດ ຫລາຍຂຶ້ນ ໃນເວລາດຽວກັນ ກໍ່ມີຄວາມສົນໃຈໃນ ວັດທະນະທຳທາງຕາເວັນອອກນຳດ້ວຍ ແມ່ນກະທັ້ງ ໃນສະໄໝ ເກຼັກ-ໂຣມັນ 2000 ປີມາແລ້ວ ກໍ່ຍັງມີ ຄຳເວົ້າທີ່ວ່າ : "ແສງສະຫວ່າງເກີດຈາກທາງ ຕາ ເວັນອອກ" ຄົນຕາເວັນຕົກ ຮູ້ວ່າ ປັນຍາ ຂອງ ມະນຸດ ຊາດຫລາຍໆຢ່າງ ໄດ້ກຳເນີດຈາກ ຕາເວັນອອກ.

ການຄົ້ນຄວ້າໃນເລື່ອງລາວ ຂອງທາງຕາເວັນ ອອກ ໄດ້ມີການແຕ່ງຕັ້ງຕຳແໜ່ງການສອນ ໃນມະຫາ ວິທະຍາໄລຕ່າງໆ ໃນຢຸໂຣບ ຕັ້ງແຕ່ 150-160 ປີ



ມາແລ້ວ. ທຳອິດກໍ່ມີການຕັ້ງສາຍວິຊາ ຄື "ອິນໂດໂລຢີ" ເພາະຊາວຕາເວັນຕົກ ເກີດຄວາມຕື່ນເຕັ້ນກັບການຄົ້ນພົບວ່າພາສາ ໃນອິນເດຍ ຫລືຊົມພູທະວີບຄືພາສາ ສັນສະກິດ ທີ່ໃຊ້ບັນທຶກ ເອກະສານ ຕ່າງໆ ເຊັ່ນ: ປະຫວັດສາດ ວັນນະຄະດີ ອັກສອນສາດ ສາສຫນາ ມີລັກສະນະໂຄງສ້າງ ທາງພາສາ ຄ້າຍຄືກັບ ພາສາທາງຕາເວັນຕົກ, ຂໍ້ສັງເກດ ນີ້ເອງໄດ້ເຮັດໃຫ້ນັກປາດ ຜູ້ມີຄວາມຮູ້ ເກີດຄວາມສົນໃຈເປັນຢ່າງຍິ່ງຈົນກະທັ້ງໄດ້ມີການກໍ່ຕັ້ງວິຊາ ທີ່ຖາວອນຂຶ້ນມາ ໃນມະຫາວິທະຍາໄລ ຫລາຍໆແຫ່ງ ໃນຢຸໂຣບ. ຕໍ່ມາກໍ່ມີການສອນພາສາຈີນ ຍີ່ປຸ່ນ ເຊິ່ງເປັນທີ່ ຍອມຮັບວ່າ ປະເທດຈີນ ເປັນປະເທດ ທີ່ໃຫຍ່ມີຄວາມສຳຄັນ ຊາວຈີນມີຄວາມສາມາດ ໃນເລື່ອງຄົ້ນພົບ ທາງດາຣາສາດ ໂຫຣະສາດ ອາວຸດຍຸທະພັນ.

ຊາວອັງກິດ ຝະລັ່ງ ເຢຍຣະມັນ ທີ່ເຄີຍເປັນປະເທດມະຫາອຳນາດໃນຢຸໂຣບ ໄດ້ຄ່ອຍໆຄືອບເຂດຂອງການສຳຫລວດຈາກຈີນ ຍີ່ປຸ່ນ ອິນເດຍ ເພາະ ເຂົ້າໃຈວ່າ ປະເທດດັ່ງກ່າວ ເປັນປະເທດທີ່ໃຫຍ່ ແຕ່ຕໍ່ມາໄດ້ຮູ້ວ່າ ຄວາມຈິງແລ້ວບໍ່ສະເພາະແຕ່ບັນດາປະເທດເຫຼົ່ານັ້ນ ທີ່ມີຄວາມສຳຄັນທາງວັດທະນະທຳ ວັນນະຄະດີ ປັຊຍາ ສາຍຕາຂອງນັກຄົ້ນຄວ້າ ໄດ້ຫັນ ມາສົນໃຈໃນແຄວ້ນສຸວັນນະພູມ ເຊິ່ງໄລຍະ 50-60 ປີ ມານີ້ຍັງບໍ່ທັນ ໄດ້ຮັບຄວາມສົນໃຈເທົ່າທີ່ຄວນ ໃນວົງການວິຊາການຂອງຊາວຢຸໂຣບ.

ພໍດີມີການລ່າຫົວເມືອງຂຶ້ນ ຊາວຕາເວັນຕົກທີ່ຕັ້ງອານານິຄົມຢູ່ຕ່າງປະເທດກໍ່ເຮັດໃຫ້ ມີການສຶກສາຄົ້ນຄວ້າ ໃນບັນດາປະເທດເຫລົ່ານັ້ນດ້ວຍ ເຊັ່ນ : ອິນໂດເນເຊຍ ຫມູ່ເກາະ ຣ໌ລັນດາ.

ສຳລັບປະເທດໃນສຸວັນນະພຸມ ເຊັ່ນ ພະມ້າ ໄທ ລາວ ກຳປູເຈຍ ກໍ່ເປັນເຂດຂອງ ການຄົ້ນຄວ້າ ແຕ່ງສຸດທ້າຍ ທີ່ ຊາວຕາເວັນຕົກ ໄດ້ເກີດຄວາມສົນໃຈຂຶ້ນມາຢ່າງເອົາຈິງເອົາຈັງ.

ສະໄຫມທີ່ເລີ່ມສຶກສາໃນມະຫາວິທະຍາໄລ ຂ້າພະເຈົ້າກໍ່ເລີ່ມສຶກສາພາສາເກຼັກ ພາສາລາແຕັງບູຮານ ຍ້ອນວ່າ ຂ້າພະເຈົ້າມີຄວາມມັກໃນປັຊຍາ ໃນສະໄຫມເກຼັກບູຮານ ແຕ່ໃນເວລາດຽວກັນ ພາກຮຽນທຳອິດ ທີ່ຂ້າພະເຈົ້າ ເຂົ້າມາ ຂ້າພະເຈົ້າຊອກຫາວິຊາໃຫມ່ໆ ຂອງທາງຕາເວັນອອກ ທີ່ຍັງບໍ່ທັນໄດ້ຮັບການເຜີຍແຜ່, ສຸດທ້າຍກໍ່ມາເລືອກຮຽນ ພາສາໄທ ຂ້າພະເຈົ້າ ຟັງດ້ວຍຄວາມຕື່ນເຕັ້ນວ່າ ພາສາ ທີ່ບໍ່ແມ່ນພາສາຂອງຕົວເອງ ມັນຈະ ເປັນແນວໃດ? ແລະ ຂ້າພະເຈົ້າກໍ່ມີຄວາມງຶດງໍ້ ແລະ ສົນໃຈເປັນຢ່າງຍິ່ງ.

ຂ້າພະເຈົ້າມີຄວາມຮູ້ສຶກວ່າ ເມື່ອມີອາຍຸຫລາຍຂຶ້ນ ເຮົາຈຶ່ງຮູ້ເຖິງຄຸນຄ່າແຫ່ງວັດທະນະທຳດີຂຶ້ນ. ທຸກມື້ນີ້ ຂ້າພະເຈົ້າ ແປກກວ່າຕອນຍັງຫນຸ່ມ ຄື ຂ້າພະເຈົ້າ ມັກອະນຸລັກຂອງເກົ່າ, ໂດຍສະເພາະຂໍ້ຂຽນ ຂອງຄົນບູຮານສະໄຫມກ່ອນ, ເມື່ອໄດ້ອ່ານແລ້ວ ຍິ່ງມີຄວາມເລິກເຊິ່ງ ຍິ່ງເກີດມີຄຳຖາມ ຫລາຍຂຶ້ນ ແລະ ຍິ່ງເກີດຄວາມສຳນຶກໃນ ປັຊະຍາ ອັນມີ ຄຸນຄ່າຫລາຍຂຶ້ນ. ເມື່ອໄດ້ສຳຜັດກັບພາສາວັນນະຄະດີຂອງລ້ານນາແລ້ວກໍ່ຍັງຕິດໃຈທີ່ຈະສານຕໍ່ມາຍັງວັນນະຄະດີ ລ້ານຊ້າງ ອີກຢ່າງບໍ່ຮູ້ສຸດສຽງ ຄວາມສົນໃຈ. ປັດ ຈຸບັນນີ້ ພາສາ ແລະ ວັນນະຄະດີລ້ານນາ ລ້ານຊ້າງ (ລາວ) ພວມໄດ້ຮັບຄວາມສົນໃຈ ຫລາຍຂຶ້ນເລື້ອຍໆ. ທີ່ມະຫາວິທະຍາໄລ ພາຊຊາວ (Passau) ປະເທດ ເຢຍຣະມັນ ນັກສຶກສາຫລາຍຄົນ ພວມເຂົ້າຄົ້ນຄວ້າ ໃນລະດັບປະລິນຍາໂທ.

ສັງຮອມ

# ການເຄື່ອນໄຫວ

* ນ. ດາຣາ ກັລຍາ ຫົວໜ້າໂຄງການ ພ້ອມກັບ ຊ່ຽວຊານ ກິຕິມະສັກ ຈາກ ສ.ສ. ເຢຍຣະມັນ ຄື ດຣ. ຣະຣັນ ຣຸນດິອຸສ ພາກັນຍິ້ມຢ່າງໄວ່ງໃຈເມື່ອ ໂຄງການປົກປັກຮັກສາໜັງສືໃບລານລາວ ໄດ້ຮັບການ ອະນຸມັດ ຈາກທັງສອງ ລັດຖະບານ ລາວ ແລະ ເຢຍຣະມັນ ພ້ອມທັງໄດ້ລົງນາມເຊັນສັນຍາຮ່ວມມືກັນ ຢ່າງເປັນທາງການ ໃນວັນທີ 23 ມີນາ 1993 ທີ່ ກະຊວງຖະແຫລງຂ່າວ ແລະວັດທະນະທຳ ຕາງໜ້າໃຫ້ຝ່າຍລາວໄດ້ແກ່ ທ່ານບົວບານ ວໍຣະຊຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຝ່າຍ ລັດຖະບານເຢຍຣະມັນຄືທ່ານ ຄລາວສ໌ ເຊີນເຊັນ ເອກອັກຄະລັດຖະທູດວິສາມັນຜູ້ມີ ອຳນາດເຕັມແຫ່ງ ສ.ສ. ເຢຍຣະມັນປະຈຳ ສ.ປ.ປ.ລາວ ໂດຍຊ້ອງໜ້າ ທ່ານ ໂອສະກັນ ທຳມະເທວາ ລັດຖະມົນຕີ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ, ແລະ ພະນັກງານຂັ້ນນຳ ຂອງ ກະຊວງ ເຂົ້າຮ່ວມຢ່າງ ພ້ອມພຽງຮຽງໜ້າ.

* ເວົ້າຄືນຫລັງ ແຕ່ໄລຍະກະກຽມໂຄງການ, ເລີ່ມແຕ່ ເດືອນມັງກອນ ນະທາບຸນເລີດ ທຳມະຈັກ ຫົວໜ້າ ໜ່ວຍສຳຫລວດ ກໍໄດ້ ນຳພາທີມງານ ລົງທົດສອບ



ປະຕິບັດງານຢູ່ທາງ ມ.ຫາດຊາຍຟອງ, ກຳແພງ ນະຄອນວຽງຈັນ ດ້ວຍຄວາມຈູບຈ້າວຫ້າວຫັນ ຄັ້ງນີ້ ເປັນ ການອຸ່ນເຄື່ອງວ່າຊ້ານເດ! ເຮັດໄປນຳ ຖອດຖອນບົດຮຽນ ໄປນຳ ແຕ່ປານນັ້ນກໍຍັງເຮັດສຳເລັດ ຮອດ 4 ວັດ .

* ເປັນແນວໃດ ອູບາອາຈານ ທາງວັດ ບ້ານນາກຸງ ເຮົາ ກຸຕິຫລັງໃຫຍ່ແລ້ວເສັດຫລືຍັງ? ເວົ້າເລື່ອງວັດບ້ານ ນາກຸງນາ ຈັ່ງແມ່ນ ຜູ້ຂ້າຍໍມືສາທຸການນຳຫຼາຍໆ ທີ່ທາງ ພະສົງສາມະເນນເພິ່ນຍັງປະຕິບັດຄອງວັດຄອງວາໄດ້ ຢ່າງເປັນໜ້າເຫລື້ອມໃສ, ຮັກສາຄອງເກົ່າຄອງເດີມ ຢ່າງ ເຄັ່ງຄັດ ເຂົ້າໄປໃນວັດ ຢ່າຄອງວ່າຊິໄດ້ໃສ່ເກີບ, ຊາວບ້ານ ເພິ່ນປະຕິບັດກັນມາໄດ້ 30-40 ປີແລ້ວ ພິເສດໃນວັດນີ້ ທັງພະທັງເນນ ຍັງພາກັນ ຂຽນໜັງສືໃບລານ ຢ່າງເປັນ ກິດຈະວັດ, ເຮັດໃຫ້ວັດນີ້ ມີໜັງສືໃບລານໃໝ່ຫລາຍ ແລະ ສຳຄັນໆເຖິງ 756 ຜູກ ຂໍໃຫ້ ສືບຕໍ່ປະຕິບັດ ແລະ ໝັ້ນຄົງຂະໜົງແກ່ນເທີ້ນ!

* ຍາພໍ່ຄຳຈັນ ເຈົ້າອາວາດ ວັດບ້ານໂດນເໜືອ ອາຍຸ 80 ກວ່າປີແລ້ວ ແຕ່ຍັງຈານໃບລານ ບໍ່ໃສ່ແວ່ນຕາ ໄດ້ສະບາຍ. ສາທຸ! ຂໍໃຫ້ໝັ້ນໃຫ້ຍືນເທາະຂ້ານ້ອຍ! ມີຈົວນ້ອຍ ຢູ່ນຳແລ້ວເບາະ? ຕູ້ໃບລານຫັ້ນໝັ້ນກວດເບິ່ງ ແນ່ໂດ່ ຍາພໍ່ເອີຍ ຈັກໜ້ອຍໜູເຂົ້າໄປເຮັດເຮືອນ ໃສ່ ບໍ່ຮູ້ເມື່ອເກາະເນາະ !

* ສະອອນວັດບ້ານດົງກະລຶມ ຈັ່ງແມ່ນກວ້າງຂວາງ ອາຣາມກະຫລັງບັກໃຫຍ່ ໜ່ວຍສຳຫລວດ ໄດ້ນອນເບີຍ ລົມ ຕອນລົງເຮັດວຽກ ສຳຫລວດຢູ່ວັດນີ້ ຈັ່ງແມ່ນຊາດ

☞

# ຂອງໂຄງການ

ສະບາຍ. ຢາທ່ານໃຫຍ່ ເຊົາປ່ວຍແລ້ວບໍ່ຂະນ້ອຍ. ຂໍໃຫ້ຫາຍວັນ ຫາຍຄືນເທາະ ອອກຕົນຍາດໂຍມ ຄືຊິດີອົກດີໃຈ ເພື່ອຊິໄດ້ ສືບຕໍ່ບົວແປງວັດວາ ສາສະໜາ ໃຫ້ຮຸ່ງເຮືອງ ໄປເມືອໜ້າ. ທ່າອິດຄິດວ່າໜັງສືໃນວັດ ຊິບໍ່ຫລາຍປານໃດ, ບາດເຮັດຕົວຈິງແລ້ວ ແອວລົດແອວໄຂຫລາຍມື້ເຕີບ ຈຶ່ງແລ້ວ ມີໜັງສື ໃບລານຕັ້ງວ່າ1.085 ຜູກ.

* ຢູ່ວັດ ບ້ານໝາກນາວໃຕ້ ຍາພໍ່ເຈົ້າວັດ ແລະ ຊາວບ້ານຕ່າງກໍດີອົກດີໃຈ ເປັນພິເສດ ທີ່ທາງລັດຖະບານ ກໍຄື ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ມີນະໂຍບາຍປົກປັກຮັກສາ ມໍລະດົກລ້ຳຄ່າຄືແນວນີ້ ຢູ່ວັດມີຕູ້ຄຳພີບູຮານງາມໆ ຮອດສອງໜ່ວຍ ຮັກສາດີໆເດີ ຂະນ້ອຍ ຫາຍາກແທ້ໆໄດ໋ ດຽວນີ້! ຢູ່ວັດບ້ານໝາກນາວໃຕ້ ມີໜັງສືໃບລານເກືອບຮອດສອງພັນຜູກ (1.717 ຜູກ) ຕອນຊິເລີກລາກັບຊາວບ້ານໝາກນາວ ຕໍ່ວ່າຕໍ່ຂານວ່າ ບ້ານໝາກນາວມີຮອດ 3 ວັດ, ແຕ່ລະວັດກໍມີໃບລານຫລາຍຄືກັນ ບໍ່ຊ່ວຍປົກປັກຮັກສາອີກບໍ, ຄືຊິເອົາແຕ່ວັດດຽວນີ້... ? ຊິມາອີກ! ຊິມາອີກ!

* ສະຫລຸບແລ້ວນັບແຕ່ວັນທີ 13/1/93 ຫາ 10/2/93 ທີ່ທາງໜ່ວຍສຳຫລວດລົງ ປະຕິບັດງານຢູ່ເຂດ ມ.ຫາດຊາຍຟອງ, ກຳແພງນະຄອນວຽງຈັນ, ເຮັດສຳເລັດ 4 ວັດ, ສາມາດທຳການປົກປັກຮັກສາໜັງສືໃບລານໄດ້ທັງໝົດ 3.952 ຜູກ ເປັນແນວໃດ ທາງສະຫາຍ ບຸນຍັງ ພະນັກງານ ວັດທະນະທຳ ເມືອງຫາດຊາຍຟອງ ຜູ້ຫ້າວຫັນອາລົມດີ ແລະນັກມ່ວນ ໄປກົ້ງເກືອກວິເວີອເຮັດວຽກງານນຳ ໜ່ວຍສຳຫລວດ ເກືອບໄດ້ເປັນນະຫາແມ່ນບໍ? ຍັງຊິພັກນຢູ່, ຄັນມີເວລາກະໄປລ່າໄປຄອຍເບິ່ງແນ່ເດີ ອັນໜັງສືທີ່ພວກເຮົາເຮັດແລ້ວ ຫັ້ນ



ນ່າ. ທາງໂຄງການ ເພິ່ນຍັງມີ ແຜນການມາທາງພີ້ຢູ່ເກາະ !

* ການສຳມະນາ ວຽກງານປົກປັກຮັກສາໜັງສືໃບລານ ຢູ່ແຂວງວຽງຈັນ ໃນວັນທີ11-12/3/93 ໄດ້ປິດລົງດ້ວຍໝາກຜົນສຳເລັດອັນຈົບງາມ ຂໍຂອບໃຈ ທ່ານໝູນແກ້ວ ອໍລະບູນ ເຈົ້າແຂວງໆວຽງຈັນ ພ້ອມດ້ວຍພະແນກວັດທະນະທຳແຂວງ ທີ່ໄດ້ໃຫ້ຄວາມຮ່ວມມື ແລະອຳນວຍຂໍ້ສະດວກທຸກຢ່າງແກ່ທາງໂຄງການ ໃນ ການຈັດສຳມະນາຄັ້ງນີ້. ແລ້ວສຳມະນາປົບ ໜ່ວຍສຳ ຫລວດກໍເລີ່ມລົງມືປະຕິບັດງານປັບໄວດ ! ໃຈຮ້ອນ ຢ້ານບໍ່ທັນກັບແຜນການ !

* ວັດສີບຸນເຮືອງ ບ້ານໂພນໝີໃຕ້ ທຳການສຳຫລວດ 5 ວັນ ກໍ່ສຳເລັດ, ອັນໜ້ຳກໍ່ຍ້ອນ ເຮັດກັບບ່ອນນອນກັບທີ່. ຢູ່ວັດນີ້ມີໜັງສືໃບລານທັງໝົດ 443 ຜູກ ຂອບໃຈນຳອ້າຍທິດເມກ ສາລະວັດບ້ານ ຄົນໜັກປາກແຕ່ໃຈດີແບບພະເຫວດ ພ້ອມກັບເຖົ້າແກ່ແນວໂຮມ ທີ່ໄດ້ໃຫ້ການຮ່ວມມື ແກ່ໜ່ວຍສຳຫລວດ, ເສຍດາຍແຕ່ຜິດນັດໃນມື້ບຸນບັ້ງໄຟແສນ ແຕ່ກໍບໍ່ເປັນຫຍັງ ເອົາໄວ້ໂອກາດໜ້າເນາະ...ໄດ້ຍິນ ອາຈານ ສະຫວິງເວົ້າວ່າ ມ່ວນເຕັມທີ ຜູ້ຂຽນ ຂໍຊົມເຊີຍ ອາຫານແຊບ ຢູ່ຮ້ານທາງແບ່ງໂພນໝີ. ຄິດຫ່ວງແຕ່ ໜັງສືໃບລານທີ່ສຳຫລວດແລ້ວ ຮັກສາດີໆແດ່ເດີ ອາຈານເອີຍ ! !

➡

## ການເຄື່ອນໄຫວ...

* ໜ່ວຍສຳຫລວດຂໍກ່າວຄຳວ່າ:ຊົມເຊີຍ ເປັນພິເສດ ຕໍ່ທາງວັດບ້ານໂພນຊອງ ແລະ ຊາວບ້ານ, ເພາະມີເອກະສານໃບລານ ນຳມາກອງໄວ້ຖ້າວໍ່ຖ້າ ກ່ອນໜ່ວຍສຳຫລວດຈະໄປເຖິງ, ຍ້ອນຢູ່ບ້ານພວກເພິ່ນ ມີຄວາມສາມັກຄີກັນດີ. ໜ່ວຍສຳຫລວດຍັງບໍ່ລືມ ນາຍບ້ານ ແລະ ເຖົ້າແກ່ແນວໂຮມຜູ້ໃຈກວ້າງ ພາເຂົ້າສາມັກຄີຍາມຄ່ຳ ບຸງແຕ່ງແບບມີວັດຊາດ ຈາກສີມືຂອງສາວ ບຸນລ້ຳ ແລະ ບົວຈັນ ສະມາຄົມຍິງຂອງບ້ານ ຍັງຕິດໃຈ ຕະຫລອດເວລາ, ເທື່ອໜ້າ ຈະໄປຮ່ວມນຳອີກເນີ.



* ໜ່ວຍສຳຫລວດ ໄປຮອດບ້ານນາໂພ ວັນທີ 7/4/93 ຍາພໍ່ເລີງ ເຈົ້າວັດບອກ ວ່າ ໜັງສືໃບລານມີຫລາຍ ເພາະແຕ່ກ່ອນພຸ້ນມີພະເຖລະຜູ້ໃຫຍ່ຂຽນໄວ້ ແຕ່ມາໄລຍະໜຶ່ງນັ້ນ ໄດ້ເອົາໄປຈູດໄຟຖິ້ມ ເນື່ອງຈາກຊຳລຸດຫລາຍ ອ່ານບໍ່ເຂົ້າ ໜ້າເຂົ້າຫລັງ, ບໍ່ຮູ້ວ່າອັນໃດເປັນອັນໃດ ສັບປົນຄົນເລກັນ, ປະໄວ້ກໍ່ບໍ່ມີປະໂຫຍດ! ໜ້າເສຍດາຍ ທີ່ໜ່ວຍ ສຳຫລວດໄປບໍ່ທັນ, ແຕ່ເມື່ອລົງມືສຳຫລວດ ຕົວຈິງແລ້ວ ກໍ່ຍັງເຫລືອໄວ້ຢູ່ປະມານ 2/3, ທ້ອນໂຮມໄດ້ ທັງໝົດ 971 ຜູກ. ໜ່ວຍສຳຫລວດຂອງ ພວກເຮົາ ຍັງບໍ່ລືມວັດຊາດຂອງໝາກໄມ້ໃຈເຫລືອງ ທີ່ ຊາວບ້ານໄດ້ນຳມາຕ້ອນຮັບ ຫົວໜ້າ ໂຄງການໃບລານ ໃນມື້ເພິ່ນໄປຢາມ, ສົມຊື່ບ້ານ ອຸດົມສົມບູນ ໄປດ້ວຍໝາກໄມ້ຫວານອີ່ຫລີ.

* ຢູ່ບ້ານນາທອງ ຊຶ່ງເປັນບ້ານເກີດຂອງ ທ່ານໜູບແກ້ວ ອໍຣະບູນ ເຈົ້າແຂວງ ແຂວງວຽງຈັນ ເຮົາເອງ ພວກເດັກເຍົາວະຊົນ ຮຸ່ນໃໝ່ ຢູ່ບ້ານນີ້ ປາກົດວ່າ ສົນໃຈໜັງສືໃບລານເປັນພິເສດ ຍາມບ່າຍພາກັນລົງມາຫລິ້ນວັດ, ເອົາຫົວສຸມເຂົ້າກັນ ຟັງຜູ້ສຳຫຼວດ ອ່ານໜັງສືລານກ້ອມ ເປັນພາສາວັນນະຄະດີ . ໃຊ້ເວລາສຳຫລວດໃບລານຢູ່ບ້ານນີ້ພຽງແຕ່ 2 ວັນ ກໍ່ ສຳເລັດ. ຍັງເສຍດາຍຟັງການເລົ່າເລື່ອງ ຂອງພໍ່ຕູ້ແນວໂຮມບ້ານ ຄາວສະໄໝ ເພິ່ນໄປຄ້າພະຈິນໄພ ທາງພາກໃຕ້ ພົບເທື່ອໜ້າ ເລົ່າຕໍ່ອີກ ກໍ່ໂຄແນ່. ເພິ່ນບອກວ່າ ຢູ່ວັດບ້ານນີ້ ບໍ່ມີໜັງສືໃບລານຫລາຍ ເນື່ອງຈາກເປັນວັດຮ້າງຫລາຍຄັ້ງ ປະຈຸບັນ ກໍ່ມີແຕ່ຍາພໍ່ອົງດຽວ. ກໍ່ໜ້າອຸກໃຈນຳເພິ່ນເວລາຕີກອງແລງ, ເພາະໄດ້ອອກແຮງທັງສອງມືຄື ມືໜຶ່ງຕີຄ້ອງ, ອີກມືໜຶ່ງຕີກອງ. ຖ້າມີຈົວບວດຢູ່ນຳ ສຽງກອງແລງ ອາດຈະມ່ວນກວ່າ ເນາະ ! ແມ່ນບໍ່ຍາພໍ່ ?

* ໄປຮອດ ວັດສົມປະເສີດ ບ້ານໂພນສີດາ, ໜ່ວຍສຳຫລວດພູມໃຈ ເພາະໄດ້ເຫັນ ວັດວາ ສາສະໜາ ມີການປະຕິສັງຂອນໃໝ່, ພະເນນກໍ່ຫລາຍ, ອາຣາມຫລັງໃຫຍ່ ແລະງາມ. ອາຈານເປີ ຫົວໜ້າແນວໂຮມ ບ້ານ ບໍ່ພຽງແຕ່ ເອົາໃຈໃສ່ ນຳໜ່ວຍສຳຫລວດ ທີ່ນັ້ນ, ແຕ່ເພິ່ນຍັງໄດ້ບອກ ຕຳລາຢາຕ່າງໆ

⟹

ໃຫ້ນຳອີກດ້ວຍ, ໃນນັ້ນກໍ່ມີຢາບົວແລ້ວ ເພື່ອເຮັດໃຫ້ແລ້ວຫນັ້ນ, ແຕ່ເພິ່ນເອງຈິ່ມເສຍໃຈ ເພາະແລ້ວ 2ອງ ກິນເອງຫວົ່ນຫມົດ ຈຶ່ງຮູ້ຈັກຢາດີໃນພາຍຫລັງ, ເອົາລະພົບກັນໃຫມ່ ເທື່ອຫນ້າ ຈະມາຢາມອີກ.

*ນັບແຕ່ເດືອນມີນາມາຮອດກໍລະກົດ ຫນ່ວຍສຳຫລວດໄດ້ເຄື່ອນໄຫວ ເຮັດວຽກການ ສຳຫລວດ ແລະ ປົກປັກຮັກສາຫນັງສືໃບລານ ສຳເລັດໄປແລ້ວ ໃນ 4 ເມືອງຄື : ໂພນໂຮງ, ແກ້ວອຸດົມ, ເມືອງເຟືອງ, ວັງວຽງ, ສະຖິຕິ ຫນັງສືໃບລານ ທີ່ໄດ້ຜ່ານການສຳຫລວດແລ້ວມີດັ່ງນີ້:

**1. ເມືອງໂພນໂຮງ :**

- ວັດສຸວັນນະຄີລີ ຈຳນວນ 804 ຜູກ
- ວັດສະກ້າ - 766 -
- ວັດໂພນຊອງ - 738 -
- ວັດໂພນຫມີໃຕ້ - 443 -
- ວັດນາຫອງ - 227 -
- ວັດໂພນສີດາ - 390 -
- ວັດນາໂພທົ່ງ - 971 -

**2. ເມືອງແກ້ວອຸດົມ :**

- ວັດນາປູນ ຈຳນວນ 291 ຜູກ

**3. ເມືອງວັງວຽງ :**

- ວັດມະຫາທາດ ຈຳນວນ 38 ຜູກ
- ວັດກາງ - 50 -
- ວັດໂພນເພັງ - 46 -
- ວັດໂພນສະອາດ - 23 -
- ວັດວຽງແກ້ວ - 56 -
- ວັດເມືອງຊອງ - 46 -

**4. ເມືອງເຟືອງ :**

- ວັດທີນເທີນເຫນືອ ຈຳນວນ 6 ຜູກ
- ວັດທີນເທີນໃຕ້ - 113 -

ສະຫລຸບລວມຈຳນວນ ຫນັງສືໃບລານ ທີ່ທາງໂຄງການ ໄດ້ສຳຫລວດ ແລະປົກປັກຮັກສາແລ້ວ ທັງຫມົດ 9.495 ຜູກ (ລວມທັງສະຖິຕິການສຳຫລວດຢູ່ເຂດເມືອງຫາດຊາຍຟອງ 4 ວັດ).

**ບາງຂໍ້ມູນ ສຳຄັນຈາກພື້ນຖານ.**

1. **ເມືອງໂພນໂຮງ :** ມີທັງຫມົດ 63 ວັດ, ມີພະ 94 ອົງ, ເນນ 68 ອົງ, ວັດທີ່ສຳຄັນມີ : ວັດໂພນຊອງ, ໂພນຫມີ, ນາໂພ, ສະກ້າ, ວັດສຸວັນນະຄີລີ.
2. **ເມືອງແກ້ວອຸດົມ :** ມີ 24 ວັດ,ວັດຮ້າງ 3 ວັດ, ມີພະ 33 ອົງ, ເນນ 21 ອົງ, ວັດສຳຄັນໃນເມືອງ ມີ: ວັດໂອກາດ, ວັດອົງຕື້, ວັດນາປູນ.
3. **ເມືອງວັງວຽງ :** ມີ 26 ວັດ, ວັດຮ້າງ 19 ວັດ, ມີພະທັງຫມົດ 37 ອົງ, ເນນ 43 ອົງ, ແບ່ງເປັນ 4 ເຂດ ຄື: ວັງວຽງ, ຜາຕັ້ງ, ນາມອນ, ນາມ່ວງ, ວັດໃນເມືອງມີ:ວັດມະຫາທາດ,ວັດກາງ, ວັດຜາຕັ້ງ.
4. **ເມືອງເຟືອງ :** ມີ 31 ວັດ, ມີພະ 20 ອົງ, ເນນ 22 ອົງ. ວັດສຳຄັນມີຄື: ວັດບ້ານດອນ, ສາມຫມື່ນ,



# ປະຫວັດການນຳໃຊ້ ໃບລານ

ສຳລິດ ບົວສີສະຫວັດ

ຕົ້ນລານ ເປັນພືດໄມ້ຊະນິດໜຶ່ງ ໃນອ່ອນນອກແຂງ ໃບກວ້າງໃຫຍ່ ແຜ່ໄປຄ້າຍໆວີ ມີໃນແຖບອາກາດ ຂ້ອນຂ້າງຮ້ອນ ມະນຸດນຳໃຊ້ໃນວັດຖຸປະສົງຫລາຍປະການ ເຊັ່ນ ໃບ ໃຊ້ໃນການຈັກສານ ແລະ ກຳບັງ ແດດ-ຝົນ ສ່ວນແກ່ນແຂງຂ້າງນອກໃຊ້ໃນ ການເຮັດຂາໜ້າກົ່ງທະນູສິນ ແລະຄ້ອນຕະບອງ ເພາະແກ່ນແຂງ ແລະ ທົນທານ ແຕ່ທີ່ສຳຄັນແມ່ນໃຊ້ໃບໃນການຈານໜັງສື ເປັນທີ່ນິຍົມກັນແຜ່ຫລາຍໃນສະໄໝກ່ອນ ເພາະການເຮັດເຈ້ຍສຳລັບຂຽນ ຍັງບໍ່ທັນ ພັດທະນາ ປະຫວັດຄວາມເປັນມາໃນການໃຊ້ ວ່າ ເກີດຂື້ນເມື່ອໃດ ໃຜເປັນຜູ້ລິເລີ້ມໃຊ້ກ່ອນໝູ່ ແລະ ຢູ່ໃສ ຍັງບໍ່ທັນພໍ້ຫລັກຖານ ເອກະສານທີ່ບັນທຶກໄວ້ ໃນທາງປະຫວັດສາດ ພໍເຫັນຮ່ອງຮອຍຢູ່ບ່ອນໜຶ່ງ ເຊິ່ງກ່ຽວກັບປະຫວັດ ການສັງຄາຍະນາພະທັມວິໄນ ຂອງ ພະພຸດທະສາດສະໜາ ປະມານສອງພັນກວ່າປີ ມາແລ້ວ ອັນນີ້ມີຫລັກຖານຄັກແນ່ ເກີດຂື້ນ ໃນການສັງຄາຍະນາຄັ້ງທີສີ່ ທີ່ເກາະລັງກາ ມີຄວາມເປັນມາ ຂ້ອນຂ້າງຍາວ ເພາະຈຳເປັນ ຕ້ອງກ່າວເຖິງ ການສັງຄາຍະນາ ເປັນລຳດັບມາຈົນເຖິງຄັ້ງທີສີ່ ເພື່ອຄວາມສຳພັນເບື້ອງເລື່ອງ ຮູ້ກັນໄວ້ກໍດີ ສຳລັບຜູ້ສົນໃຈໃນທາງນີ້.

ຄວາມມີຢູ່ວ່າ ພະພຸທະເຈົ້າ ປະຣິນິພພານ ປະມານໄດ້ເຈັດວັນ ພະພິກຂຸຜູ້ສຳເຣັດ ອໍຣະຫັນ ເກີດທັມມະສັງເວດ ຜູ້ຍັງເປັນປຸຖຸຊົນ ເກີດຄວາມໂສກເສົ້າ ໂອກາອາໄລຮັກ ຕອນນັ້ນມີພິກຂຸຕົນໜຶ່ງບວດເມື່ອ ເຖົ້າມີຊື່ວ່າສຸພັດທະ ຫ້າມພິກຂຸທັງຫລາຍວ່າ ຢ່າໂສກ ເສົ້າໄປເລີຍ ບັດນີ້ເຮົາພົ້ນທຸກພົ້ນຍາກແລ້ວ ພຼະສະມະນະ ໂຄດົມຕາຍນັ້ນ ຄືໜັກໜາ ຫາຜູ້ມາຈູ້ຈີ້ຈຸກຈິກຫ້າມນັ້ນຫ້າມນີ້ ອັນນັ້ນກໍຜິດອັນນີ້ກໍບໍ່ຊອບ ປຽດຕີນປຽດມື ໄປທາງໃດກໍບໍ່ໄດ້ ມີແຕ່ອັນຫ້າມ ອັນປາມ ບັດນີ້ພະອົງຕາຍແລ້ວພວກເຮົາກໍສະບາຍ ຢາກເຮັດແນວໃດ ກໍໄດ້ຕາມໃຈມັກ ພະມະຫາກັດສະປະ ເກີດສັງເວດສະຫລົດໃຈ ພະພຸທະອົງ ປະຣິນິພພານ ພຽງເຈັດວັນ ກໍມີຜູ້ສັນດານບາບຫຍາບຊ້າ ກ່າວຈ້ວງຈາບ ພະທັມວິໄນ ຕໍ່ໄປຈະເຮັດສາສະໜາໃຫ້ເສື່ອມ ຄອນອາຕະມາ ຫາທາງແກ້ໄຂ ແຕ່ໃນຕອນນັ້ນ ຍັງບໍ່ຖວາຍພະເພີງພະພຸດທະເຈົ້າ ເພິ່ນຈິ່ງລະງັບໄວ້ກ່ອນ ຫລັງຖວາຍພະເພີງ ພະສະຣີຣະຂອງ ພຼະພຸທະເຈົ້າ ແລ້ວໄດ້ສາມເດືອນ ພຼະມະຫາ ກັດສະປະ ປາຣົບ ການກ່າວຈ້ວງຈາບ ພະທັມວິໄນ ຂອງສຸພັດທະ ພິກຂຸ ສະເຫນີຄະນະສົງ ທຳສັງຄາຍະນາ ຄືຊຳຣະສະສາງ ແລະ ຮ້ອຍກອງທັມ ວິໄນໃຫ້ ບໍຣິສຸດຜ່ອງໃສ ໃນຖ້ຳສັດຕະປັນນະຄູຫາ ມີພະເຈົ້າ ອາຊາດສັດຕູເປັນຜູ້ອຸປະຖຳ ນັບເປັນປະຖົມມະ ສັງຄາຍະນາ.

ພຸທະສາສະໜາລ່ວງມາອີກຮ້ອຍປີ ມີເລື່ອງວັດຖຸສິບປະການ ອັນພິກຂຸວັດຊີບຸດ ແກ້ໄຂພະວິໄນເກີດຂື້ນ ພະອໍຣະຫັນຕະສົງ ສະໄໝນັ້ນ ເຫັນວ່າ ບໍ່ຖືກຕ້ອງພະວິໄນ ຈະແປປ່ຽນຈິ່ງລະງັບ ແລະ ຊຳຣະສະສາງ ນັບເປັນທຸຕິຍະສັງຄາຍະນາ.

ຕໍ່ມາອີກ ພຸທະສາດສະໜາລ່ວງມາໄດ້ ສາມຮ້ອຍປີ ມະຫາຣາດ ຂອງອິນເດຍຄົນສຳຄັນ ຄື ພະເຈົ້າອະໂສກະມະຫາຣາດ ຫັນມານັບຖື ພຼະພຸທະສາສະໜາ ເຜີຍແຜ່ອານຸພາບໂດຍກອງທັບ ນຳສາສະໜາ ອອກເຜີຍແຜ່ທັງໃນ ແລະ ຕ່າງປະເທດ ເປັນເຫດໃຫ້ ລາບສັກກະມາກມາຍ ຫລວງຫລາຍ ເກີດຂື້ນ ພະພິກຂຸສົງຢູ່ດີກິນດີ ເຮັດໃຫ້ພວກອະລັດຊີ ບໍ່ມີ

ຢ່າງອາຍ ເອົ້າມາບອດ ເພື່ອລ້ຽງຊີບ ແລະ ພວກເດຍຣະຖີ ປອມບອດຢ່າງຫລວງຫລາຍ ເປັນເຫດໃຫ້ ພຼະສາສະຫນາເສື່ອມເສຍ ຈຶ່ງມີການຊຳຣະສະສາງ ໃຫ້ພວກບໍ່ດີສິກ ແລະ ທຳສັງຄາຍະນາ ຄັ້ງທີສາມ ເປັນຕະຕິຍະສັງຄາຍະນາ.

ຕໍ່ມາອີກ ພຸທະສາສະຫນາລວງມາໄດ້ ສີ່ຮ້ອຍປີ ຢູ່ທີ່ລັງກາທີບ ພຸທະສາສະນິກະຊົນ ແຕກສາມັກຄີກັນ ຍ້ອນທັດສະນະໃນການປະຕິບັດທຳ ຄື ພະສົງ ຢູ່ໃນຄາມວາສີ (ວັດບ້ານ) ປະຕິບັດຄັນຖະທຸຣະ, ພະສົງໃນອະຣັນຍະວາສີ(ວັດປ່າ) ປະຕິບັດ ວິປັດສະນາທຸຣະ ຕ່າງກໍອ້າງວ່າ ຕົນດີ ຕົນຖືກ ຝ່າຍກົງກັນຂ້າມຜິດ. ວັດບ້ານຫາວ່າວັດປ່າໂງ່ ບໍ່ຮໍ່າຮຽນ ມີແຕ່ຫລັບຫູ ຫລັບຕາພາວະນາ, ສ່ວນວັດປ່າກໍໂຕ້ຕອບວ່າ ພວກວັດບ້ານໂລບມາກໂລພາຫາ ລາບສັກກາຣະ ບໍ່ໄດ້ຊຶມ ຣົດພະທັມ ເປັນກັບແກ້ເຜົ້າໂກນ.ທັດສະນະທີ່ວ່າມີຮອດຍາດໂຍມ ຜູ້ອຸປະຖຳ ທຳໃຫ້ແຕກສາມັກຄີ ຄວາມຈິງແລ້ວ ທຸຣະ ທັງສອງວັດບ້ານ ຫລື ວັດປ່າມີພາຣະຕ້ອງປະຕິບັດເຊັ່ນດຽວກັນຄວາມເຫັນເຊັ່ນນັ້ນ ເປັນເພາະ ກິເລດພາໄປ ພະສົງ ຜູ້ໃຫຍ່ເຫັນສະພາບພາສາສະຫນາໃຫ້ເສື່ອມ ຈຶ່ງໄດ້ຊຳຣະສະສາງ ແລ້ວທຳສັງຄາຍະນາ ເປັນຄັ້ງທີສີ່ (ຈະຕຸດຖະສັງຄາຍະນາ) ຄັ້ງນີ້ ມີ ພະອໍຣະຫັນ ນ້ອຍນັກຜູ້ຈັກຊົງຈຳດ້ວຍມຸກຂະປາຖະ ຄື ຈື່ມເອົາດ້ວຍປາກ ມີນ້ອຍເຕັມທີ ຕໍ່ໄປອ້າງຫນ້າ ທັມມະວິໄນ ຈະວິປະຣິດແປຜັນ ຈຶ່ງປຶກສາກັນໃຫ້ທຳເປັນລາຍລັກອັກສອນ ຄື ຈານໃສ່ໃບລານ ໄວ້ເປັນຫລັກຖານ ຕາມຕຳນານບອກວ່າ ຫນັງສືໃບລານທີ່ຈານຮຽບຮ້ອຍແລ້ວ ກອງສູງຖ້ວມຫລັງຊ້າງ ຫນ້ອຍຫລາຍປານໃດ ຂໍໃຫ້ຄິດເບິ່ງ.



ສັງຄາຍະນາ ຄັ້ງທີສີ່ນີ້ແຫລະ ເປັນສິ່ງຢັ້ງຢືນວ່າ ມີການໃຊ້ໃບລານຈານຫນັງສື ດັ່ງທີ່ກ່າວມາແລ້ວ ບັດນີ້ ກໍໄດ້ປະມານສອງພັນກວ່າປີແລ້ວ ແຕ່ຄວາມຈິງການໃຊ້ໃບລານຈານຫນັງສື ຄົງມີກ່ອນຫນ້າ ສັງຄາຍະນາ ຄັ້ງທີ່ສີ່ຢ່າງແນ່ນອນ ແຕ່ບໍ່ມີເອກະສານຢືນຢັນເຊັ່ນ ສັງຄາຍະນາເທື່ອນີ້ ຢ່າງໃດກໍດີ ຫນັງສືຜູກໃບລານກໍມີອາຍຸການຫລາຍພັນປີມາແລ້ວທີ່ເຂົ້າສູ່ປະເທດເຮົາ ວັນ ເດືອນ ປີ ໃດ ກໍຈົນໃຈອີກນັ້ນແຫລະ. ຍ້ອນບໍ່ມີຫລັກຖານຢືນຢັນ ແຕ່ສັນນິດຖານ ໄດ້ຢ່າງແນ່ໃຈ ແມ່ນມາພ້ອມກັບພຼະພຸທະສາສະຫນາ ແຜ່ເຂົ້າສູ່ລາວ ຢ່າງ ບໍ່ຕ້ອງສົງໄສ ຄົງຈະເປັນໃນສະໄຫມ ດິນແດນນີ້ ຍັງຮຽກ ວ່າ ສຸວັນນະພູມຜຸ້ນລະ ຈະຢ່າງໃດກໍ ຕາມ ຫນັງສືຜູກໃບລານກໍມີການໃກ້ຊິດ ສະໜິດແໜ້ນ ກັບຊີວິດປະຊາຊາດລາວມາແຕ່ດົນນານ ເປັນແຫລ່ງ ທ້ອນໂຮມສິລະປະ ວັນນະຄະດີ ຄຳສັ່ງສອນຂະຫນົບທຳນຽມປະເພນີ ມີຄຸນຄ່າສູງຢ່າງລໍ້າເລີກ ຕົກທອດມາ ຮອດຍຸກເຮົາ ເປັນມໍຣະດົກທາງພູມປັນຍາ ຫນ້າຊົມເຊີຍ ຂອງເຫລົ່ານັກປາດ

# ປະຫວັດການນຳໃຊ້ ...

ອາຈານ ຜູ້ເປັນປຸບພະຊົນ ຂອງປະຊາຊາດລາວ ເຮົາຄວນສຳນຶກ ແລະ ຊູ້ບຸນຄຸນຂອງເພີ່ນ ໂດຍການຄາຣະວະ ປົກປັກຮັກສາ ແລະ ນຳໃຊ້ໃນກາລະເທສະ ອັນຄວນບັດນີ້ ຂະບວນການອັນນີ້ ກຳລັງໄດ້ຮັບການ ເຫັນດີ ເຫັນຊອບຈາກທຸກຂັ້ນ ແລະ ໄດ້ອະນຸໂມທະນາ ສາທຸການ ໂດຍທົ່ວໄປໃນຂົງເຂດອັນກວ້າງຂວາງ.

ຂ້າພະເຈົ້າເອົາເລື່ອງສັງຄາຍະນາພະທັມອີໃບ ມາເລົ່າໂດຍຫຍໍ້ ພໍເລັກນ້ອຍ ເພື່ອເຍືອງທາງຢືນຢັນ ຫລັກການນຳໃຊ້ໃບລານ ເທົ່ານັ້ນ ສວນສັງຄາຍະນາ ທີ່ລະອຽດນັ້ນ ເປັນເລື່ອງໃຫຍ່ ແລະ ຍາວ ມັນແມ່ນ ປະຫວັດສາດ ພຸທະສາສະໜາສ່ວນໜຶ່ງ ຜູ້ສົນໃຈຈະຊອກອ່ານໄດ້ ໃນໜັງສືຜູກໃບລານກໍມີໃນບາງວັດ

ຈັ່ງໃດກໍໄດ້ເວົ້າກັບມາແລ້ວ ຢາກທຳຄວາມເຂົ້າໃຈໜ້ອຍໜຶ່ງ ໃນຄຳວ່າ "ສັງຄາຍະນາ ຫລື ສັງຄາຍະນາຍ" ຄຳນີ້ ມີເລົ້າປາລີ ໂດຍບໍ່ຕ້ອງສົງໄສ ໝາຍຄວາມວ່າ ການຮ້ອຍກອງ ຫລື ຊຳຣະສະສາງ ພະທັມອີໃບ ຄຳສັ່ງສອນຂອງພະພຸດທະເຈົ້າໃຫ້ປອດໃສ ຖືກຕ້ອງຕາມເຄົ້າຕາມມູນຂອງເກົ່າ ບໍ່ໃຫ້ວິບປະຣິດ ແປຜັນ ຜິດຈາກຮີດທຳນອງຂອງຊາວພຸດ ເພື່ອເປັນບັນທັດຖານ ໃນການປະຕິບັດ ເລື່ອງເຊັ່ນວ່ານີ້ ມີຂຶ້ນເປັນຍຸກໆ ທີ່ສຳຄັນ ເປັນສາກົນທົ່ວໄປ ມີຢູ່ຫ້າຄັ້ງ ໃນອິນເດຍສາມຄັ້ງ ໃນລັງກາສອງຄັ້ງ ນອກນັ້ນ ຖືວ່າສັງຄາຍະນາທ້ອງຖິ່ນຂອງປະເທດນັ້ນໆ ເຊິ່ງມີຢູ່ຫລາຍຄັ້ງ ບໍ່ນັບເປັນສາກົນ.

ຂໍ້ສັງເກດອັນໜຶ່ງ ເລື່ອງການ ສັງຄາຍະນານີ້ແຫລະ ມີທາງອັງໃຫ້ເກີດລັດທິນິກາຍ ເພາະຜູ້ທີ່ບໍ່ເຫັນດ້ວຍກັບສ່ວນກາງ ກໍຈະແຍກຕົວອອກໄປ ຕັ້ງຄະນະໃໝ່ຂອງຕົນ ອັນນີ້ເປັນທຳມະດາ ຂອງ ທຸກສາສະໜາເພາະມະນຸດ ຍັງໜາແໜ້ນດ້ວຍກິເລດຕັນຫາ ທິຖິມານະ ທາງອອກທີ່ດີ ແມ່ນບໍ່ຄວນຫົວຊາ.



## ກ່ຽວກັບໂຄງການ

( ຕໍ່ຈາກໜ້າ 1 )

ດັ່ງທີ່ກ່າວມາແລ້ວ ວ່າມີເອກະສານສຳຄັນ ຈຳນວນຫລວງຫລາຍຖືກປ່ອຍປະລະເລີຍຈົນ ເກີດຄວາມເສຍຫາຍຍ້ອນສາເຫດຫລາຍປະການ. ດ້ວຍເຫດນີ້ ໄປຄຽງ ຄູ່ກັບວຽກງານປົກປັກຮັກສາ, ໂຄງການ ຍັງ ມີໜ້າທີ່ ສຶກສາອົບຮົມ ປຸກລຸກສະຕິຕື່ນຕົວຂອງປະຊາຊົນ ພະຍາຍາມໃຫ້ຮັບຮູ້ ແລະ ເຂົ້າໃຈຄຸນຄ່າອັນສູງສົ່ງ ຂອງໜັງສືໃບລານ ທັງ ໃນແງ່ຄວາມໝາຍສຳຄັນ ທາງປະຫວັດສາດ ສາດສະໜາ ຕະຫລອດ ເຖິງດ້ານສິລະປະວັນນະກຳ ແລະ ຮີດຄອງປະເພນີ.

ພ້ອມດຽວກັນນີ້ ໂຄງການຍັງມີຈຸດປະສົງ ທີ່ຈະສົ່ງເສີມຊຸກຍູ້ ການສຶກສາກ່ຽວກັບເອກະສານບູຮານນຳໃຊ້ຂອງດີທີ່ມີຢູ່ໃນໃບລານ ເຂົ້າສູ່ພາກປະຕິບັດຕົວຈິງຂອງວົງການສຶກສາຂອງພະສົງ, ພ້ອມທັງອຳນວຍໃຫ້ມະຫາຊົນທົ່ວໄປໄດ້ຊົມໃຊ້ ແລະ ຮ່ຳຮຽນຄົ້ນຄວ້າ ເນື້ອໃນໃຈຄວາມ ທີ່ມີປະໂຫຍດແກ່ສັງຄົມ ແລະ ນຳອອກເຜີຍແຜ່ ຢ່າງກວ້າງຂວາງ ເພື່ອສຶກສາອົບຮົມເຍົາວະຊົນຮຸ່ນໃໝ່ ໄດ້ສຳນຶກ ແລະ ສົນໃຈຢາກຮຽນຮູ້ພູມປັນຍາຂອງຄົນບູຮານ, ຮູ້ເລືອກເຟັ້ນ ຫລື ເຫັນຄຸນຄ່າຂອງວັນນະຄະດີ ແລະ ວັດທະນະທຳທີ່ສອດຄ່ອງກັບ ຍຸກສະໄໝ.

ກອນລຳສັ້ນ

# ສະຫວັນ ເມືອງ ຄົນ

ຟັງເດີເຈົ້າ
ຫລານຊິພັນລະນາ
ເລື່ອງນີ້ ບໍ່ໄດ້ຫາຍ
ເວົ້າພໍເປັນຍອນໆ
ຫລານນີ້ບໍ່ໄດ້ຍິນ
ສັບຫາກແມ່ນມັນສິ
ນີ້ບໍ່ແມ່ນເລື່ອງໃໝ່
ໄວ້ເປັນອຸທາຫອນ
ເລື່ອງສະຫວັນນີ້ລະພໍ່
ຢ່າຊິພາກັນເດົາ
ມັນໄກແທ້ໄກອາ
ວ່າມັນຢູ່ຊັ້ນເທິງ
ຍາມເປັນຄົນຕ້ອງປອດ
ມີແຕ່ບຳເພັນຕົນ
ຍາມຕາຍໄປບໍ່ພາດ
ອັນນີ້ ມັນສຳຄັນ
ຄວາມຜູ້ເຖົ້າເພິ່ນວ່າ
ຫລານຢາກຂໍເວົ້າພຽງ
ສະຫວັນຢູ່ໃກ້ໆ
ໃຊ້ເວລາບໍ່ເທິງ
ອັນນີ້ຫລານຊິບອກ
ຫລື ວ່າຄວາມສະຫນຸກ
ສະຫວັນນີ້ລະບ່ອນ
ໃຜກໍປາຖະຫນາ
ເປັນດິນແດນຂາວປອດ
ບໍ່ມີພວກຈັ່ງໄຣ

ຍາພໍ່ສັດທາ
ເລື່ອງບຸນເລື່ອງບາບ
ໄດ້ທື້ໄດ້ຄອນ
ເຕືອນໃຈໄວ້ຈື່ມ
ໃຫ້ເຊື່ອໃຫ້ຖື
ຊິຖືກະໄດ້
ຄຳບອກຄຳສອນ
ສອນໃຈຈົດຈໍ່
ມັນບໍ່ໄກເຮົາ
ວ່າສະຫວັນຊັ້ນຟ້າ
ບໍ່ມີຜູ້ໄປເຖິງ
ຕາຍໄປຈິ່ງຮອດ
ສ້າງກໍ່ກຸສົນ
ຈຳສິນຢ່າຂາດ
ຂຶ້ນສູ່ສະຫວັນ
ຟັງຫລານຊິວ່າ...
ຫລານບໍ່ຂໍຖຽງ
ຍາມຍັງປາກໄດ້
ໄປຮອດໄປເຖິງ
ຍາວນານຫຍັງດອກ
ສະຫວັນແມ່ນຄວາມສຸກ
ສະຫນານພັກຜ່ອນ
ຫາຍໂສກໂສກາ
ໄປເຖິງໄປຮອດ
ສະຫວ່າງສະໄຫວ
ສໍ້ໂກງຂູດຮີດ

ມີແຕ່ຄວາມເປັນມິດ
ມີມະໂນທຳສູງ
ບໍ່ມີການວິວາດ
ໄປທາງໃດກໍມີ
ບໍ່ມີເລື່ອງປັນປ່ວນ
ນີ້ລະຄືສະຫວັນ
ເຈົ້າເດຢາກເຫັນບໍ
ທັງແມ່ປ້າແມ່ນາຍ
ສ້າງໂລດເດີອີ່ພໍ່
ໃຫ້ພາກັນເຮັດເອົາ
ຍາມຕາຍໄປບໍ່ຮູ້
ເຮົາລົດບໍ່ແນ່ໃຈ
ຫລານນີ້ຢາກເວົ້ານໍ່
ຂຶ້ນສະຫວັນທັງເປັນ
ຈັ່ງຊັ້ນລະ ຄວາມບໍ່ດີຢ່າສູ່
ໃຫ້ເຈົ້າຈົດເຈົ້າຈຳ
ຂໍ້ທີຫນຶ່ງໃຫ້ລະ
ຂໍ້ທີສອງສຳຄັນ
ຂໍ້ທີສາມບໍ່ຫລິ້ນ
ຄືວ່າຢ່າມົວເມົາ
ໃຫ້ລະແດ່ທາງເພດ
ຂໍ້ນີ້ໃຫ້ເຈົ້າເອົາ
ຂໍ້ທີ່ສີ່ອີກແມ່
ອັນນີ້ມັນຜິດຄອງ
ຄົນຜູ້ໃດປະຫມາດ
ຢ່າສູ່ພາກັນງົມ

ເປັນຫມູ່ເປັນຝູງ
ສິນທຳບໍ່ຂາດ
ສ້າງແຕ່ຄວາມດີ
ແຕ່ເລື່ອງມ່ວນໆ
ຂ້າກັນຕີກັນ
ເມືອງຄົນອີ່ພໍ່
ຢ່າສູ່ຟ້າວຕາຍ
ພາກັນຕຸມຕໍ່
ສະຫວັນບ້ານເຮົາ
ຍາມເຮົາຍັງຢູ່
ຈັກໄປຢູ່ທາງໃດ
ໄປສະຫວັນ ຫລືບໍ່
ເອົາບ່ອນຕາເຫັນ
ນຳກັນພ້ອມຫມູ່
ພາເຮັດພາທຳ
ຟັງຄຳຂ້ອຍວ່າ
ຂ້າກັນຕີກັນ
ຢ່າຕົວະຢ່າຕົ້ມ
ຄັນແມ່ນເຮັດເອົາ
ກົ້ວການກີເລດ
ຜົວເຂົາເມຍເຂົາ
ໃສ່ໃຈຈຳແດ່
ໂລບລັກເອົາຂອງ
ຢ່າທຳເດັດຂາດ
ມັນຈຸ່ມມັນຈົມ
ຈົບຫາຍແປນເປົ່າ

ອ້ທີ່ຫາເລື່ອງເຫລົ້າ ກະຢ່າກິນຫລາຍ
ຄັນບໍ່ຢາກຈິບຫາຍ ຢ່າໃກ້ຢ່າມໍ່
ທັງຫມົດນີ້ລະພໍ່ ທາງສູ່ສະຫວັນ
ປະຕິບັດທຸກວັນ ຢ່າໄລຢ່າຂາດ
ຮັບປະກັນບໍ່ພາດ ຊາດຮຸ່ງເຮືອງໃສ
ລາວຊິສີວິໄລ ເປັນສະຫວັນຄັກແນ່
ບໍ່ເຊື່ອລອງໂລດແມ່ ຍາມບໍ່ທັນຕາຍ
ຍາມນີ້ຍັງບໍ່ສວາຍ ຊິເຫັນຢູ່ດອກ
ອັນນີ້ຫລານຊີ້ບອກ ທາງສູ່ສະຫວັນ
ທາງນາລົກຄືກັນ ງ່າຍປານປອກກ້ວຍ
ອັນນີ້ກະບໍ່ຕອງມ້ອຍ ນາລົກຕາເຫັນ
ຕົກນາລົກທັງເປັນ ເຈົ້າເຫັນແລ້ວບໍ່
ນາລົກນີ້ຢູ່ມໍ່ ມີຕົວມີຕົນ
ຄືຄວາມສົນລະວົນ ວຸ້ນວາຍຮ້າຍກາດ
ບ່ອນສົງຄາມລະບາດ ຄົນລົ້ມຄົນຕາຍ
ເລືອດເຮ່ຍຊະເຮ່ຍຊາຍ ໂຫຍຫວນຮ້ອງຮ່ຳ
ມີແຕ່ລະເບີດບ່ຳ ໄຟລອກໄຟລົນ
ເກີດຄວາມໂກລະຫົນ ວົນຕາຍອຶດຢາກ
ມີແຕ່ຄວາມທຸກຍາກ ລຳບາກເຂັນໃຈ
ແນມໄປທາງບ່ອນໃດ ມີແຕ່ຄວາມປ່າເຖື່ອນ
ບໍ່ມີຄວາມເປັນເພື່ອນ ແຕກແຍກພົງພັນ
ບໍ່ມີຄວາມສຳພັນ ຮຸນແຮງກົ້ວໂກດ
ຄົນກະຄົນຂີ້ໂຫດ ຂີ້ໂລບຂີ້ໂກງ
ຄົນທີ່ບໍ່ປະສົງ ສິບທຳຝັກໄຝ່
ອັນນີ້ແຫລະ
ເພິ່ນເວົ້ານາລົກໃຫຍ່ ເວົ້າບ່ອນຕາເຫັນ
ຕົກນາລົກທັງເປັນ ເຫັນແລ້ວບໍ່ແມ່
ຄິດຄັກໆເບິ່ງແດ່ ເດີພວກສັດທາ
ໃຫ້ຄ່ອຍເຮັດຄ່ອຍຫາ ຄວາມດີຄວາມຊອບ
ໃຫ້ຊ່ອຍກັນປະກອບ ສ້າງສວງສະຫວັນ
ສ້າງໃຫ້ເປັນວິມານ ທັນຕາໄດ້ຢູ່
ອັນນີ້ແລ້ວລະປູ່ ຄຳວ່າ ສະຫວັນ
ບໍ່ແມ່ນເລື່ອງ
ຄວນຊິອັດສະຈັນ ຮ້ອຍໂຍດພັນໂຍດ
ຮູ້ຈັກແລ້ວເຮັດໂລດ ມັນຂື້ນກັບເຮົາ
ໃຫ້ພາກັນຈຳເອົາ ໂອ້ເດີອີ່ແມ່...
ຢ່າສູ່ມົວຕັ້ງແຕ່ ເຫັນເງິນເຫັນຄຳ
ໃຫ້ເອົ້າອັດຝັງທຳ ຈຳຄຳສອນສັ່ງ
ບໍ່ແມ່ນມີແຕ່ນັ່ງ ລອງຂື້ນສະຫວັນ
ຄັນແມ່ນບໍ່ພາກັນ ເຮັດເອົາບໍ່ໄດ້
ເຖິງແມ່ນຫລານເວົ້າໃຫມ່ ແຕ່ບໍ່ນອກຄຳສອນ
ບໍ່ແມ່ນຫລານຊອນລອນ ຊູລູຊອດລວດ
ໃຫ້ໄປຖາມນັກບວດ ຄູບາອາຈານ
ເພິ່ນຊິຊີ້ຫລັກຖານ ສະຫວັນບົ່ງບອກ
ຮັບຮອງວ່າບໍ່ນອກ ຕຳລັບຕຳລາ
ສິ່ງທີ່ຫລານເວົ້າມາ ສັດຈະທຳຄັກແນ່
ເຈົ້າຊິມີຕັ້ງແຕ່ ຄວາມສຸກສະບາຍ
ສຸກທັງໃຈ ທັງກາຍ ບໍ່ອຶດບໍ່ຢາກ
ບໍ່ມີຄວາມທຸກຍາກ ລຳບາກແນວໃດ
ນີ້ລະເພິ່ນວ່າໄປ ສະຫວັນຍ່ອງໆ..

✿ ລຳໂດຍ ໝໍລຳ ທອງໃບ ໂພທິສານ



# ທິດທາງ ແຜນການ ດຳເນີນງານ

ໂຄງການປົກປັກຮັກສາໜັງສືໃບລານລາວ ມີທິດທາງ ແລະ ແຜນການ ດຳເນີນງານໃນຂອບເຂດທົ່ວປະເທດ ກຳນົດ 8 ປີ ນັບແຕ່ປີ 1993 ເຖິງປີ 2.000 ແຜນການຂອງ ໂຄງການນີ້ ຈະພະຍາຍາມ ສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ ໃຫ້ໄດ້ ຫລາຍວັດເທົ່າທີ່ຈະຫລາຍໄດ້ ດ້ວຍການ ຍົກລະດັບ ວຽກປົກປັກຮັກສາ ດ້ານຄຸນນະພາບເປັນຫລັກເກນ. ຄືລາຄາຈາກຜົນການສຳຫລວດເບື້ອງຕົ້ນ ຊຶ່ງທາງ ຄະນະຮັບຜິດຊອບ ໂຄງການ ຄາດກະໄວ້ວ່າ ຈະປົກປັກຮັກສາ ໃຫ້ໄດ້ 250 ວັດຂຶ້ນໄປ ໂດຍຮັບປະກັນວ່າ ເອກະສານ ທີ່ສຳຄັນໆ ໃນທົ່ວ 17 ແຂວງ ຈະຕ້ອງໄດ້ ຮັບການ ປົກປັກຮັກສາເປັນຢ່າງດີ.



ເພື່ອຮັບປະກັນໃຫ້ ການປະຕິບັດແຜນການ ໄດ້ດຳເນີນຕໍ່ເນື່ອງ ແລະ ທົ່ວເຖິງ ຄະນະຮັບຜິດຊອບ ໂຄງການ ໄດ້ວາງແຜນການ ດຳເນີນງານ ໃນທົ່ວປະເທດ ດັ່ງນີ້ :

* ປີທີ I ( 1993 )
1. ກຳແພງນະຄອນວຽງຈັນ
2. ແຂວງວຽງຈັນ
* ປີທີ II ( 1994 )
1. ແຂວງຫລວງພະບາງ
2. ແຂວງໄຊຍະບູລີ
* ປີທີ III ( 1995 )
1. ແຂວງຈຳປາສັກ
2. ແຂວງເຊກອງ
3. ແຂວງອັດຕະປື
* ປີທີ IV ( 1996 )
1. ແຂວງສະຫວັນນະເຂດ
2. ແຂວງສາລະວັນ
* ປີທີ V ( 1997 )
1. ແຂວງຄຳມ່ວນ
2. ແຂວງບໍລິຄຳໄຊ
* ປີທີ VI ( 1998 )
1.ແຂວງຊຽງຂວາງ
2. ແຂວງຫົວພັນ
* ປີທີ VII ( 1999 )
1. ແຂວງຜົ້ງສາລີ
2. ແຂວງອຸດົມໄຊ
* ປີທີ VIII (2000)
1. ແຂວງຫລວງນ້ຳທາ
2. ແຂວງບໍ່ແກ້ວ

ສ່ວນການເລືອກເຟັ້ນວັດ ທີ່ຈະ ລົງສຳຫລວດ ແລະ ປົກປັກຮັກສາໃນ ແຕ່ ລະທ້ອງຖິ່ນເຂດແຂວງນັ້ນ ຈະດຳເນີນ ໂດຍ ຄະນະຮັບຜິດຊອບໂຄງການ ສົມທົບ ກັບ ທາງພື້ນຖານ ທັງຝ່າຍພະແນກ ວັດທະນະທຳ ພ.ສ.ລ.ແຂວງ, ແນວລາວສ້າງຊາດ ແລະ ອຳນາດ ປົກຄອງ ໃນທ້ອງຖິ່ນເອງ.

ຖ້າຫາກວ່າ ວຽກງານດັ່ງກ່າວຍັງ ບໍ່ສຳເລັດ ພາຍໃນ 8 ປີ ກໍຈະດຳເນີນຕໍ່ ອີກ 2 ປີ ເພື່ອໃຫ້ ໂຄງການນີ້ ບັນລຸຜົນສຳເລັດ ຕາມຄາດຫມາຍ ຄືສ້າງໃຫ້ ຊາວບ້ານໃນທ້ອງຖິ່ນມີ ຄວາມສາມາດ ສືບຕໍ່ເປັນເຈົ້າການ ໃນການ ປົກປັກຮັກສາເອົາເອງ, ພ້ອມທັງປະສານງານ ກັບທ້ອງຖິ່ນໃກ້ຄຽງ, ສ້າງໃຫ້ ມີຕາຫນ່າງ ບຸກຄົນ ຜູ້ສົນໃຈ ທ້າວທັນຮັບຜິດຊອບ ໃນການປົກປັກຮັກສາຫນັງສືພູກໃບລານ ແລະ ຟື້ນຟູ ປະເພນີ ວັນນະຄະດີ ອັນຈົບງາມນີ້ໃຫ້ມີ ຊີວິດຊີວາ ສືບຕໍ່ໄປ.

**ເຈົ້າຂອງ**
ໂຄງການປົກປັກຮັກສາຫນັງສືໃບລານລາວ
**ສຳນັກງານ**
ກະຊວງຖະແຫລງຂ່າວ ແລະວັດທະນະທຳ
ຕູ້ ປ.ນ. 1631 , ວຽງຈັນ
ໂທລະສັບ 5373
ພິມທີ່ ວາລະສານ ວັນນະສິນ
ເພື່ອໂຄສະນາເຜີຍແຜ່